ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 0063/23-ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 14 ມີນາ 2023

ແຈ້ງການ

ຮຽນ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງກຳນົດມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ເພື່ອກຳນົດຜູ້ມີສິດເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ແລະ ກຳນົດມື້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ແລະ ວາລະການປະຊຸມ ຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

- ອີງຕາມ ມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ຄັ້ງທີ 2/2023, ລົງວັນທີ 21 ກຸມພາ 2023
- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 04/ສຄກຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊ, ລົງວັນທີ 27 ທັນວາ 2018.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ) ຂໍຖືເປັນກຽດແຈ້ງກຳນົດມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ເພື່ອກຳນົດຜູ້ມີສິດເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ແລະ ກຳນົດມື້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ແລະ ວາລະການປະຊຸມ ຂອງ ບໍລິສັດ ດັ່ງນີ້:

1. ມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນແມ່ນກຳນົດມື້ ວັນທີ 17 ມີນາ 2023 ເພື່ອກຳນົດຜູ້ມີສິດເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022
2. ມື້ຈັດກອງປະຊຸມສາມັນ ຜູ້ຖືຮຸ້ນ ຂອງບໍລິສັດ ປະຈຳປີ 2022 ແມ່ນ ວັນທີ 25 ເມສາ 2023 ເວລາ 09:30 ໂມງ, ທີ່ ໂຮງແຮມ ແລນມາກ ແມ່ຂອງ ລີເວີໄຊທ໌ ຫ້ອງ Pearl Room, ເຊິ່ງລາຍລະອຽດຂອງວາລະການປະຊຸມມີດັ່ງນີ້:
    1. ພິຈາລະນາຮັບຮອງລາຍງານການປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021

2. ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2022
3. ພິຈາລະນາຮັບຮອງງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ, ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນ) ປະຈຳປີ 2022
4. ພິຈາລະນາອະນຸມັດການຈັດສັນກຳໄລສຸດທິ ປະຈຳປີ 2022 ແລະ ງົບຈ່າຍເງິນປັນຜົນ
5. ພິຈາລະນາອະນຸມັດແຜນການດຳເນີນການ, ເງິນເດືອນພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2023
6. ພິຈາລະນາອະນຸມັດງົບຈ່າຍຄ່າຕອບແທນລາຍປີ 2022 ສຳລັບຜູ້ອຳນວຍການ (ສະມາຊິກສະພາບໍລິຫານ) ຂອງບໍລິສັດ
7. ພິຈາລະນາອະນຸມັດກຳນົດຄ່າຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ (ສະມາຊິກສະພາບໍລິຫານ) ປະຈຳປີ 2023
8. ພິຈາລະນາແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການກວດສອບບັນຊີ ປະຈຳປີ 2023
9. ພິຈາລະນາເລື່ອງອື່ນໆ (ຖ້າມີຜູ້ສະເໜີເພີ່ມເຕີ່ມ)

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ

ດ້ວຍຄວາມນັບຖືຢ່າງສູງ

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມຍ MAHATHUEN LEASING PUBLIC COMPANY

(ທ່ານ ນາມ ຕຣີລິດວິໄລ)